ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 195/ນຍ
ນະຄອນຫຼວງວຽງຈັນ, ວັນທີ 12.06.2017

# ດຳລັດ
ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມ ໜັງສືສະເໜີຂອງຄະນະກຳມະການຄຸ້ມຄອງຫຼັກຊັບ, ສະບັບເລກທີ 06/ຄຄຊ, ລົງວັນທີ 27 ກຸມພາ 2017;
- ອີງຕາມ ໜັງສືສະເໜີຂອງ ກະຊວງພາຍໃນ ສະບັບເລກທີ 121 /ພນ, ລົງວັນທີ 09 ພຶດສະພາ 2017.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໂຄງປະກອບການຈັດຕັ້ງ, ໜ້າທີ່, ຂອບເຂດສິດ, ຫຼັກການ ແລະ ແບບແຜນວິທີການເຮັດວຽກຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອຮັບຜິດຊອບໂດຍກົງຕໍ່ລັດຖະບານ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາວຽກງານຫຼັກຊັບ ໃຫ້ມີປະສິດທິພາບ, ແນໃສ່ເຮັດໃຫ້ການລະດົມທຶນ ແລະ ພັດທະນາຕະຫຼາດຫຼັກຊັບມີການເຄື່ອນໄຫວຢ່າງຕໍ່ເນື່ອງ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ຂຽນຫຍໍ້ດ້ວຍຕົວອັກສອນວ່າ “ ຄຄຊ ” ມີຊື່ເປັນພາສາອັງກິດ ແມ່ນ “ Lao Securities Commission ” ຂຽນຫຍໍ້ດ້ວຍຕົວອັກສອນວ່າ “ LSC ” ແມ່ນການຈັດຕັ້ງຂອງລັດຖະບານ ມີພາລະບົດບາດ ເປັນເສນາທິການໃຫ້ລັດຖະບານ ໃນການຄຸ້ມຄອງມະຫາພາກທາງດ້ານວຽກງານຫຼັກຊັບຢ່າງລວມສູນ ໃນຂອບເຂດທົ່ວປະເທດ.